ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 0690 /ກສ
ນະຄອນຫຼວງວຽງຈັນ, ວັນທີ 19 FEB 2026

# ຂໍ້ຕົກລົງ
# ວ່າດ້ວຍການກຳນົດເນື້ອໃນແບບພິມ ແລະ ການພິມຕາມແບບພິມ ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 1044/ກປມ, ລົງວັນທີ 28 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 0652/ຫກ, ລົງວັນທີ 09 ກຸມພາ 2026.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແລະ ການພິມເນື້ອໃນລະອຽດຕາມແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນດັ່ງກ່າວ ເພື່ອນຳໃຊ້ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແນໃສ່ຮັບປະກັນການຮັບຮູ້ສິດນຳໃຊ້ທີ່ດິນຂອງປະຊາຊົນທີ່ໄດ້ອາໄສ ຫຼື ທຳການຜະລິດຢູ່ໃນເຂດທີ່ດິນປ່າໄມ້ ຫຼັງກຳນົດເຂດດັ່ງກ່າວເປັນທີ່ດິນປ່າໄມ້ ຈົນຮອດການປະກາດໃຊ້ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ໂດຍມີກຳນົດເວລາ, ເງື່ອນໄຂ ແລະ ໃຫ້ປະຊາຊົນໃນເຂດດັ່ງກ່າວ ມີສ່ວນຮ່ວມໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

### ມາດຕາ 2 ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ

ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແມ່ນ ເອກະສານທີ່ບັນທຶກຂໍ້ມູນຈາກການຂຶ້ນທະບຽນອອກໃບ ຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຕາມເລກລຳດັບ ໂດຍມີ ລາຍເຊັນ ແລະ ຕາປະທັບ ຂອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ.

ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແມ່ນ ເອກະສານທີ່ເປັນຫຼັກຖານຕົ້ນຕໍອັນໜຶ່ງອັນດຽວກ່ຽວກັບສິດໃນການນຳໃຊ້ທີ່ດິນປ່າໄມ້ ຊຶ່ງໄດ້ຄັດສຳເນົາຢ່າງຖືກຕ້ອງຈາກໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງສິດໃນການນຳໃຊ້ທີ່ດິນປ່າໄມ້ພຽງໃບດຽວ ນຳໃຊ້ເປັນຫຼັກຖານ ຕາມກຳນົດເວລາບໍ່ເກີນ ຫ້າສິບປີ, ມີເນື້ອທີ່ ບໍ່ເກີນຊາວ ເຮັກຕາ ຕໍ່ ຄອບຄົວ ແລະ ສາມາດຕໍ່ໄດ້ ຕາມການເຫັນດີ ຂອງອົງການລັດທີ່ກ່ຽວຂ້ອງ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ກ່ຽວກັບ ການກຳນົດເນື້ອໃນແບບພິມ ແລະ ການພິມຕາມແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຢູ່ ສປປ ລາວ.

## ໝວດທີ 2
## ເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້

**ມາດຕາ 4 ປະເພດເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້**

ເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ທີ່ສາມາດເຊື່ອມຕໍ່ກັບຖານຂໍ້ມູນ ພົນລະເມືອງ ແລະ ບັດປະຈຳຕົວ ຂອງກະຊວງປ້ອງກັນຄວາມສະຫງົບ ຊຶ່ງ ມີ ສອງ ປະເພດ ດັ່ງນີ້:

1. ເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຂອງບຸກຄົນ.
2. ເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ຂອງລັດ, ລວມໝູ່.

**ມາດຕາ 5 ເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ບຸກຄົນ.**

ລັກສະນະພາຍນອກ ຂອງໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຂອງບຸກຄົນ ມີຂະໜາດເຈັ້ຍ A4 (210 X 297 ມິລີແມັດ), ດ້ານໜ້າເປັນສີຂາວ, ມີເຄື່ອງໝາຍຊາດ, ຊື່ປະເທດ, ຄຳຂວັນຂອງຊາດ, ສັນຍາລັກລູກສອນຊີ້ບອກໄປທາງທິດເໜືອຂອງແຜນທີ່ປະເທດ, ຂອບເປັນສີເຫຼືອງ ທີ່ມີລາຍເປັນສີຂາວ. ສຳລັບດ້ານຫຼັງ ໄດ້ກຳນົດ ສິດ, ພັນທະ, ຂໍ້ຫ້າມ ແລະ ການເສຍສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງຜູ້ໄດ້ຮັບໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້.

ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ມີເນື້ອໃນອັນດຽວກັນ ຊຶ່ງປະກອບມີ ດັ່ງນີ້:

1. ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ;
2. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ;
3. ເລກທີ;
4. ອອກຄັ້ງທີ;
5. ບາໂຄດ; h

6. ທີ່ຕັ້ງຕອນດິນ;
7. ແຂວງ/ນະຄອນຫຼວງວຽງຈັນ;
8. ເມືອງ/ນະຄອນ;
9. ຕາແສງ;
10. ບ້ານ;
11. ໜ່ວຍ;
12. ອອກໃຫ້ແກ່;
13. ວັນເດືອນປີເກີດ, ສັນຊາດ, ອາຊີບ;
14. ທີ່ຢູ່ປັດຈຸບັນ ບ້ານ, ໜ່ວຍ, ຕາແສງ, ເມືອງ, ແຂວງ;
15. ຊື່ ແລະ ນາມສະກຸນ ຜົວ ຫຼື ເມຍ;
16. ສັນຊາດ, ອາຊີບ;
17. ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້;
18. ຖານະຄວາມເປັນເຈົ້າຂອງສິດນຳໃຊ້ທີ່ດິນປ່າໄມ້;
19. ປະເພດທີ່ດິນປ່າໄມ້, ເຂດ;
20. ເປົ້າໝາຍການນຳໃຊ້ທີ່ດິນປ່າໄມ້;
21. ປຶ້ມທະບຽນໃບຢັ້ງຢືນການນຳໃຊ້ທີ່ດິນ ເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ;
22. ຕອນດິນເລກທີ, ເນື້ອທີ່ດິນ (ຕາແມັດ);
23. ມາດຕາສ່ວນ;
24. ແຜນທີ່ຕອນດິນ;
25. ອອກໃຫ້ທີ່, ວັນທີ, ເດືອນ, ປີ, ລາຍເຊັນ ແລະ ຕາປະທັບ ຂອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ.

**ມາດຕາ 6 ເນື້ອໃນແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຂອງລັດ, ລວມໝູ່.**

ລັກສະນະພາຍນອກ ຂອງໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຂອງລັດ, ລວມໝູ່ ມີຂະໜາດເຈັ້ຍ A4 (210 X 297 ມີລີແມັດ), ດ້ານໜ້າເປັນສີຂາວ, ມີເຄື່ອງໝາຍຊາດ, ຊື່ປະເທດ, ຄຳຂວັນຂອງຊາດ, ສັນຍາລັກລູກສອນຊີ້ບອກໄປທາງທິດເໜືອຂອງແຜນທີ່ປະເທດ, ຂອບເປັນສີເຫຼືອງມີລາຍເປັນສີຂາວ. ສຳລັບ ດ້ານຫຼັງໄດ້ກຳນົດ ສິດ, ພັນທະ, ຂໍ້ຫ້າມ ແລະ ການເສຍສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງຜູ້ໄດ້ຮັບໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້.

ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ມີເນື້ອໃນອັນດຽວກັນ ຊຶ່ງປະກອບມີ ດັ່ງນີ້:

1. ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງວຽງຈັນ;
2. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ;
3. ເລກທີ;
4. ອອກຄັ້ງທີ;
5. ບາໂຄດ;
6. ທີ່ຕັ້ງຕອນດິນ;
7. ແຂວງ/ນະຄອນຫຼວງວຽງຈັນ;
8. ເມືອງ/ນະຄອນ;
9. ຕາແສງ;
10. ບ້ານ;

11. ໜ່ວຍ;
12. ອອກໃຫ້ແກ່;
13. ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້;
14. ປະເພດທີ່ດິນປ່າໄມ້, ເຂດ;
15. ເປົ້າໝາຍການນຳໃຊ້ທີ່ດິນປ່າໄມ້;
16. ປື້ມທະບຽນໃບຢັ້ງຢືນການນຳໃຊ້ທີ່ດິນ ເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ;
17. ຕອນດິນເລກທີ, ເນື້ອທີ່ດິນ (ຕາແມັດ);
18. ມາດຕາສ່ວນ;
19. ແຜນທີ່ຕອນດິນ;
20. ອອກໃຫ້ທີ່, ວັນທີ, ເດືອນ, ປີ, ລາຍເຊັນ ແລະ ຕາປະທັບ ຂອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ.

**ມາດຕາ 7 ການຈັດພິມແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຈັດພິມແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້, ແລ້ວຈັດສົ່ງໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ເພື່ອນຳສົ່ງໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ. ສຳລັບການພິມຕາມແບບພິມ ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແມ່ນປະຕິບັດຕາມມາດຕາ 5 ແລະ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ໂດຍນຳໃຊ້ໂປຣແກຣມຖານຂໍ້ມູນທະບຽນທີ່ດິນ ລາວແລນເຣັກ (Lao Land Reg).

ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ອອກແຈ້ງການໃຫ້ທຸກພາກສ່ວນພາຍໃນທ້ອງຖິ່ນຂອງຕົນ ໄດ້ຮັບຊາບ ກ່ຽວກັບການນຳໃຊ້ແບບພິມ ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງ ຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຕາມຂໍ້ຕົກລົງສະບັບນີ້.

## ໝວດທີ 3
## ການພິມເນື້ອໃນລະອຽດ ໃສ່ແບບພິມ ໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້

**ມາດຕາ 8 ການພິມເນື້ອໃນລະອຽດໃສ່ແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງ ຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້**

ການພິມເນື້ອໃນລະອຽດໃສ່ແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ແລະ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ໃຫ້ນຳໃຊ້ໂປຣແກຣມຖານຂໍ້ມູນທະບຽນທີ່ດິນ ລາວແລນເຣັກ (Lao Land Reg) ຊຶ່ງປະກອບມີ ສອງ ເນື້ອໃນໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ດັ່ງນີ້:

1. ການພິມເນື້ອໃນໃສ່ໃບຢັ້ງຢືນການນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ອອກໃຫ້ແກ່ ລັດ, ລວມໝູ່;
2. ການພິມເນື້ອໃນໃສ່ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ອອກໃຫ້ແກ່ ບຸກຄົນ.

**ມາດຕາ 9 ການພິມເນື້ອໃນໃສ່ໃບຢັ້ງຢືນການນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ອອກໃຫ້ແກ່ ລັດ, ລວມໝູ່**

ການພິມເນື້ອໃນໃສ່ດ້ານໜ້າຂອງໃບຢັ້ງຢືນການນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ອອກໃຫ້ແກ່ ລັດ, ລວມໝູ່ ໃຫ້ປະຕິບັດ ດັ່ງນີ້:

**1. ເລກທີ:** ໃຫ້ພິມຕາມເລກລໍາດັບການອອກໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການ ການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແຕ່ລະຕອນພາຍໃນບ້ານ;

**2. ອອກຄັ້ງທີ:** ໃຫ້ພິມຈໍານວນຄັ້ງ ຂອງການອອກໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງ ຢືນ ການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ທີ່ມີການປ່ຽນແປງໃບຢັ້ງຢືນການນໍາໃຊ້ທີ່ດິນແຕ່ລະຄັ້ງ ແລະ ໃຫ້ພິມເປັນ ເລກສາກົນ (ເລີ່ມຈາກລໍາດັບທີ 1, 2, 3 ແລະ ຕໍ່ໆໄປ);

**3. ທີ່ຕັ້ງຕອນດິນ:** ໃຫ້ພິມຕົວເລກລະຫັດ ແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ຕາແສງ, ນະຄອນ ແລະ ບ້ານ ບ່ອນທີ່ດິນຕັ້ງຢູ່ ໂດຍມີ ເກົ້າ ຕົວເລກ ເຊັ່ນ ສອງ ຕົວເລກທໍາອິດ ແມ່ນລະຫັດ ແຂວງ, ນະຄອນ ຫຼວງວຽງຈັນ, ສາມ ຕົວເລກທາງກາງ ແມ່ນ ລະຫັດ ເມືອງ, ນະຄອນ ແລະ ສີ່ ຕົວເລກສຸດທ້າຍ ແມ່ນ ລະຫັດ ບ້ານ ບ່ອນທີ່ດິນຕັ້ງຢູ່. ຖ້າມີເລກລະຫັດຕາແສງ ກໍໃຫ້ພິມໃສ່ຕື່ມຕາມລໍາດັບ;

**4. ອອກໃຫ້ແກ່:** ໃນກໍລະນີອອກໃຫ້ແກ່ ອົງການຈັດຕັ້ງພັກ, ລັດ ໃຫ້ພິມຊື່ຂອງອົງການຈັດຕັ້ງດັ່ງ ກ່າວໃສ່ເລີຍ. ສໍາລັບ ລວມໝູ່ ໃຫ້ພິມຊື່ບ້ານດຽວ ຫຼື ຫຼາຍບ້ານ ທີ່ນໍາໃຊ້ທີ່ດິນປ່າໄມ້ຮ່ວມກັນ;

**5. ການໄດ້ມາຂອງສິດນໍາໃຊ້ທີ່ດິນປ່າໄມ້:** ໃຫ້ພິມຕາມຊື່ຂອງຂໍ້ຕົກລົງ ທີ່ໄດ້ມອບສິດນໍາໃຊ້ທີ່ດິນ ປ່າໄມ້ ໂດຍໃສ່ເລກທີ, ລົງວັນທີ ຂອງຂໍ້ຕົກລົງດັ່ງກ່າວ;

**6. ປະເພດທີ່ດິນປ່າໄມ້:** ໃຫ້ພິມຊື່ຕາມແຕ່ລະປະເພດທີ່ດິນປ່າໄມ້ ເຊັ່ນ ປ່າປ້ອງກັນແຫ່ງຊາດ, ປ່າປ້ອງ ກັນລະດັບ ແຂວງ, ເມືອງ ແລະ ບ້ານ; ປ່າສະຫງວນແຫ່ງຊາດ, ປ່າສະຫງວນລະດັບ ແຂວງ, ເມືອງ ແລະ ບ້ານ ແລະ ປ່າຜະລິດແຫ່ງຊາດ. ສໍາລັບເຂດ ໃຫ້ພິມຕາມເຂດທີ່ຕັ້ງຂອງຕອນດິນ ເຊັ່ນ ທົ່ງພຽງ, ພູພຽງ ແລະ ພູດອຍ ພ້ອມກັນນັ້ນ ໃຫ້ພິມຕື່ມ ເຊັ່ນ ຕົວເມືອງ, ຊານເມືອງ ແລະ ຊົນນະບົດ;

**7. ເປົ້າໝາຍການນໍາໃຊ້ທີ່ດິນປ່າໄມ້:**

7.1 ສໍາລັບ ອົງການຈັດຕັ້ງພັກ, ລັດ: ໃຫ້ພິມຕາມເປົ້າໝາຍຂອງການມອບສິດນໍາໃຊ້ທີ່ດິນປ່າໄມ້ ເປັນຕົ້ນ ທໍາການຜະລິດການກະສິກໍາ, ປູກໄມ້; ມີກໍານົດເວລາບໍ່ເກີນ ຫ້າສິບ ປີ;

7.2 ສໍາລັບ ລວມໝູ່: ໃຫ້ພິມຕາມເປົ້າໝາຍຂອງການມອບສິດນໍາໃຊ້ທີ່ດິນປ່າໄມ້ ເປັນຕົ້ນ ທີ່ດິນ ປຸກສ້າງ ຫຼື ທີ່ດິນທໍາການຜະລິດ (ທີ່ດິນນາ, ທີ່ດິນສວນປູກພືດກະສິກໍາ, ທີ່ດິນລ້ຽງສັດ, ທີ່ດິນສວນປູກໄມ້ ແລະ ທີ່ດິນໜອງປາ), ທີ່ດິນປ່າຊ້າ, ປ່າສັກສິດ ຕາມແຕ່ລະກໍລະນີ; ກໍານົດເວລາບໍ່ເກີນ ຫ້າສິບ ປີ;

**8. ປຶ້ມທະບຽນໃບຢັ້ງຢືນການນໍາໃຊ້ທີ່ດິນເຫຼັ້ມທີ, ໃບທີ ແລະ ແຜນທີ່ຕາດິນເລກທີ:**

8.1 ປຶ້ມທະບຽນໃບຢັ້ງຢືນການນໍາໃຊ້ທີ່ດິນເຫຼັ້ມທີ: ໃຫ້ພິມຕາມເລກລໍາດັບຂອງປຶ້ມທະບຽນໃບຢັ້ງ ຢືນການນໍາໃຊ້ທີ່ດິນ;

8.2 ໃບທີ: ໃຫ້ພິມຕາມເລກລໍາດັບຂອງເລກທີໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນ ການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້;

8.3 ແຜນທີ່ຕາດິນເລກທີ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2";

**9. ຕອນດິນເລກທີ, ເນື້ອທີ່ດິນ ແລະ ມາດຕາສ່ວນ:**

9.1 ຕອນດິນເລກທີ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2";

9.2 ເນື້ອທີ່ດິນ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2" ໂດຍໃຫ້ພິມຫົວໜ່ວຍເປັນຕາແມັດ;

9.3 ມາດຕາສ່ວນ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2";

**10. ອອກໃຫ້ທີ່:** ໃຫ້ພິມຊື່ ເມືອງ/ນະຄອນ.

**11. ວັນທີ, ເດືອນ, ປີ:** ໃຫ້ພິມຕາມວັນທີ່ຫົວໜ້າຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ເມືອງ, ນະ ຄອນ ລົງລາຍເຊັນ.

ໃນກໍລະນີຫົວໜ້າຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ມີການມອບສິດໃຫ້ຜູ້ຮອງ ຮັບຜິດຊອບວຽກງານແທນຊົ່ວຄາວ ກ່ອນເຊັນໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ ທີ່ດິນ ໃນເຂດທີ່ດິນປ່າໄມ້ ໃຫ້ຂຽນ ຄໍາວ່າ "ເຊັນແທນ" ຢູ່ທາງໜ້າຕໍາແໜ່ງຫົວໜ້າຫ້ອງການ ພ້ອມທັງຂຽນ ຄໍາວ່າ "ຮອງຫົວໜ້າຫ້ອງການ" ໃສ່ລຸ່ມຫົວໜ້າຫ້ອງການ.

**ມາດຕາ 10 ການພິມເນື້ອໃນໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ອອກໃຫ້ແກ່ ບຸກຄົນ**

ການພິມເນື້ອໃນໃສ່ດ້ານໜ້າຂອງໃບຢັ້ງຢືນການນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ອອກໃຫ້ແກ່ ບຸກຄົນ ໃຫ້ປະຕິບັດ ດັ່ງນີ້:

**1. ເລກທີ:** ໃຫ້ພິມຕາມເລກລຳດັບການອອກໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແຕ່ລະຕອນພາຍໃນບ້ານ;

**2. ອອກຄັ້ງທີ:** ໃຫ້ພິມຈຳນວນຄັ້ງ ຂອງການອອກໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ທີ່ມີການປ່ຽນແປງໃບຢັ້ງຢືນການນຳໃຊ້ທີ່ດິນແຕ່ລະຄັ້ງ ແລະ ໃຫ້ພິມເປັນເລກສາກົນ (ເລີ່ມຈາກລຳດັບທີ 1, 2, 3 ແລະ ຕໍ່ໆໄປ);

**3. ທີ່ຕັ້ງຕອນດິນ:** ໃຫ້ພິມຕົວເລກລະຫັດ ແຂວງ, ນະຄອນຫຼວງວຽງຈັນ, ເມືອງ, ນະຄອນ, ຕາແສງ ແລະ ບ້ານ ບ່ອນທີ່ດິນຕັ້ງຢູ່ ໂດຍມີ ເກົ້າ ຕົວເລກ ເຊັ່ນ ສອງ ຕົວເລກທຳອິດ ແມ່ນລະຫັດ ແຂວງ, ນະຄອນຫຼວງວຽງຈັນ, ສາມ ຕົວເລກທາງກາງ ແມ່ນ ລະຫັດ ເມືອງ, ນະຄອນ, ຕາແສງ ແລະ ສີ່ ຕົວເລກສຸດທ້າຍ ແມ່ນ ລະຫັດ ບ້ານ ບ່ອນທີ່ດິນຕັ້ງຢູ່;

**4. ອອກໃຫ້ແກ່:**

4.1 ຖ້າເປັນຊັບເດີມ: ໃຫ້ພິມຊື່ ແລະ ນາມສະກຸນຂອງຜົວ ຫຼື ເມຍ ຫຼື ເຈົ້າຂອງສິດນຳໃຊ້ທີ່ດິນ;

4.2 ຖ້າເປັນສິນສົມສ້າງ: ໃຫ້ພິມທັງຊື່ຜົວ ແລະ ຊື່ເມຍໃສ່. ສຳລັບຜົວ ຫຼື ເມຍທີ່ເປັນຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຫຼື ຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ເຖິງແມ່ນວ່າເປັນສິນສົມສ້າງກໍຕາມ ແມ່ນບໍ່ໃຫ້ພິມຊື່ຮ່ວມໃນໃບຢັ້ງຢືນການນຳໃຊ້ທີ່ດິນ;

4.3 ຖ້າເປັນສິດນຳໃຊ້ທີ່ດິນຮ່ວມກັນ: ໃຫ້ພິມຊື່ເຈົ້າຂອງສິດນຳໃຊ້ທີ່ດິນແຕ່ລະຄົນ (ຜູ້ທີ່ມີສິດນຳໃຊ້ທີ່ດິນຮ່ວມກັນມີແຕ່ພົນລະເມືອງລາວເທົ່ານັ້ນ);

ສຳລັບ ຊື່ ແລະ ນາມສະກຸນຂອງເຈົ້າຂອງສິດນຳໃຊ້ທີ່ດິນປ່າໄມ້ ໃຫ້ເອົາຕາມບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ.

**5. ວັນ ເດືອນ ປີເກີດ, ສັນຊາດ ແລະ ອາຊີບ:** ໃຫ້ພິມຕາມບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຂອງຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນປ່າໄມ້. ໃນກໍລະນີ ເປັນສິດນຳໃຊ້ທີ່ດິນຮ່ວມກັນ ໃຫ້ພິມຂໍ້ມູນ ວັນ ເດືອນ ປີເກີດ, ສັນຊາດ ແລະ ອາຊີບ ຂອງຜູ້ທີ່ມີຊື່ທຳອິດຢູ່ໃນໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້;

**6. ທີ່ຢູ່ປັດຈຸບັນ ບ້ານ, ໜ່ວຍ, ຕາແສງ, ເມືອງ, ແຂວງ:** ໃຫ້ພິມຕາມບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຂອງເຈົ້າຂອງສິດນຳໃຊ້ທີ່ດິນ. ໃນກໍລະນີຢູ່ນະຄອນຫຼວງວຽງຈັນ ແມ່ນ ບໍ່ໃຫ້ພິມ ຄຳວ່າ ແຂວງ ໂດຍໃຫ້ພິມຄຳວ່າ ນະຄອນຫຼວງວຽງຈັນ. ກໍລະນີເຈົ້າຂອງສິດນຳໃຊ້ທີ່ດິນຮ່ວມ ໃຫ້ພິມຂໍ້ມູນຂອງຜູ້ທີ່ມີຊື່ທຳອິດຢູ່ໃນໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້;

**7. ຊື່ ແລະ ນາມສະກຸນ ຂອງຜົວ ຫຼື ເມຍ:** ໃຫ້ພິມຊື່ ແລະນາມສະກຸນ ຂອງຜົວ ຫຼື ເມຍ ຕາມບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ;

**8. ສັນຊາດ ແລະ ອາຊີບ:** ໃຫ້ພິມຕາມບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ ຂອງຜົວ ຫຼື ເມຍ ເຖິງຈະເປັນຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວກໍຕາມ;

**9. ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້:** ໃຫ້ພິມຕາມການໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້ ເປັນ ຕົ້ນ ໄດ້ອາໄສ ຫຼື ທຳການຜະລິດ ຢູ່ໃນເຂດທີ່ດິນປ່າໄມ້ ຫຼັງການກຳນົດເຂດດັ່ງກ່າວເປັນທີ່ດິນປ່າໄມ້ ຈົນຮອດການປະກາດໃຊ້ກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ປີ 2019, ໄດ້ຈາກການຈັດສັນທີ່ດິນຂອງລັດ, ໄດ້ຈາກການຕົກລົງຂອງອົງການຈັດຕັ້ງລັດທີ່ກ່ຽວຂ້ອງ, ການສືບທອດສິດນຳໃຊ້ທີ່ດິນປ່າ ໄມ້, ການມອບ ຫຼື ຍົກ ສິດນຳໃຊ້ທີ່ດິນປ່າໄມ້ໃຫ້ຕາມສາຍຍາດ;

**10. ຖານະຄວາມເປັນເຈົ້າຂອງສິດນຳໃຊ້ທີ່ດິນປ່າໄມ້:** ໃຫ້ພິມ ຄຳວ່າ ຊັບເດີມ ຫຼື ສິນສົມສ້າງ ຫຼື ສິດນຳໃຊ້ທີ່ດິນປ່າໄມ້ຮ່ວມກັນ;

**11. ປະເພດທີ່ດິນປ່າໄມ້, ເຂດ:** ໃຫ້ພິມຊື່ຕາມແຕ່ລະປະເພດທີ່ດິນປ່າໄມ້ ເຊັ່ນ ປ່າປ້ອງກັນແຫ່ງຊາດ,

ປ່າປ້ອງກັນລະດັບ ແຂວງ, ເມືອງ ແລະ ບ້ານ; ປ່າສະຫງວນແຫ່ງຊາດ, ປ່າສະຫງວນລະດັບ ແຂວງ, ເມືອງ, ບ້ານ ແລະ ປ່າຜະລິດແຫ່ງຊາດ. ສໍາລັບເຂດ ໃຫ້ພິມຕາມເຂດທີ່ຕັ້ງຂອງຕອນດິນ ເຊັ່ນ ທົ່ງພຽງ, ພູພຽງ ແລະ ພູດອຍ ພ້ອມກັນນັ້ນ ໃຫ້ພິມຕື່ມ ເຊັ່ນ ຕົວເມືອງ, ຊານເມືອງ ແລະ ຊົນນະບົດ;

**12. ເປົ້າໝາຍການນໍາໃຊ້ທີ່ດິນປ່າໄມ້:** ໃຫ້ພິມຄໍາວ່າ ທີ່ດິນປຸກສ້າງ ຫຼື ທີ່ດິນທໍາການຜະລິດ (ທີ່ດິນນາ, ທີ່ດິນສວນປູກພືດກະສິກໍາ, ທີ່ດິນລ້ຽງສັດ, ທີ່ດິນສວນປູກໄມ້ ແລະ ທີ່ດິນໜອງປາ), ກະສິກໍາທີ່ມີລັກສະນະແບບໝູນວຽນ ແລະ ທີ່ດິນອື່ນ ຕາມແຕ່ລະກໍລະນີ; ກໍານົດເວລາບໍ່ເກີນ ຫ້າສິບ ປີ;

**13. ປື້ມທະບຽນໃບຢັ້ງຢືນການນໍາໃຊ້ທີ່ດິນເຫຼັ້ມທີ, ໃບທີ, ແຜນທີ່ຕາດິນເລກທີ:**

13.1 ປື້ມທະບຽນໃບຢັ້ງຢືນການນໍາໃຊ້ທີ່ດິນເຫຼັ້ມທີ: ໃຫ້ພິມຕາມເລກລໍາດັບຂອງປື້ມທະບຽນໃບຢັ້ງຢືນການນໍາໃຊ້ທີ່ດິນ;

13.2 ໃບທີ: ໃຫ້ພິມຕາມລໍາດັບຂອງເລກທີໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້;

13.3 ແຜນທີ່ຕາດິນເລກທີ: ໃຫ້ພິມລະອຽດຕາມແບບພິມ "ກ 2";

**14. ຕອນດິນເລກທີ, ເນື້ອທີ່ດິນ, ມາດຕາສ່ວນ:**

14.1 ຕອນດິນເລກທີ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2";

14.2 ເນື້ອທີ່ດິນ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2" ໂດຍໃຫ້ພິມຫົວໜ່ວຍເປັນຕາແມັດ;

14.3 ມາດຕາສ່ວນ: ໃຫ້ພິມຂໍ້ມູນຕາມແບບພິມ "ກ 2";

**15. ອອກໃຫ້ທີ່:** ໃຫ້ພິມຊື່ເມືອງ/ນະຄອນ.

**16. ວັນທີ ເດືອນ ປີ:** ໃຫ້ພິມຕາມວັນທີ່ຫົວໜ້າຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ລົງລາຍເຊັນ.

ໃນກໍລະນີຫົວໜ້າຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ມີການມອບສິດໃຫ້ຜູ້ຮອງຮັບຜິດຊອບວຽກງານແທນຊົ່ວຄາວ ກ່ອນເຊັນໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຂອງບຸກຄົນ ໃຫ້ຂຽນ ຄໍາວ່າ "ເຊັນແທນ" ຢູ່ທາງໜ້າຕໍາແໜ່ງຫົວໜ້າຫ້ອງການ ພ້ອມທັງຂຽນ ຄໍາວ່າ "ຮອງຫົວໜ້າຫ້ອງການ" ໃສ່ລຸ່ມຫົວໜ້າຫ້ອງການ.

### ມາດຕາ 11 ການພິມເນື້ອໃນດ້ານຫຼັງໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້

ການພິມເນື້ອໃນດ້ານຫຼັງໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ໃຫ້ແກ່ ລັດ, ລວມໝູ່ ແລະ ບຸກຄົນ ໄດ້ກໍານົດສິດ, ພັນທະ, ຂໍ້ຫ້າມ ແລະ ການເສຍສິດນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງຜູ້ໄດ້ຮັບໃບຢັ້ງຢືນການນໍາໃຊ້ທີ່ດິນປ່າໄມ້ ດັ່ງນີ້:

**1. ສິດ ຂອງຜູ້ໄດ້ຮັບສິດນໍາໃຊ້ທີ່ດິນປ່າໄມ້:**

1) ຊົມໃຊ້ທີ່ດິນ ບໍ່ເກີນ ຫ້າສິບ ປີ, ມີເນື້ອທີ່ ບໍ່ເກີນ ຊາວເຮັກຕາ ຕໍ່ຄອບຄົວ;

2) ປົກປັກຮັກສາທີ່ດິນ;

3) ໄດ້ຮັບໝາກຜົນຈາກທີ່ດິນ ໃນບາງກໍລະນີ ເຊັ່ນ ຜົນຜະລິດ (ເກັບກູ້ ໝາກຜົນ ຫຼື ລາຍໄດ້ຈາກການນໍາໃຊ້ທີ່ດິນ), ສິນເຊື່ອກາກບອນປ່າໄມ້;

4) ສືບທອດສິດນໍາໃຊ້ທີ່ດິນ.

**2. ພັນທະ ຂອງຜູ້ໄດ້ຮັບສິດນໍາໃຊ້ທີ່ດິນປ່າໄມ້:**

1) ພັດທະນາ ແລະ ນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຖືກຕ້ອງຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

2) ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ເຊາະເຈື່ອນ, ຍຸບລົງ, ເຊື່ອມໂຊມ, ຮັກສາຄຸນນະພາບໃຫ້ເໝາະສົມ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ;

3) ການນໍາໃຊ້ທີ່ດິນປ່າໄມ້ ຕ້ອງໄດ້ປູກໄມ້ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມປົກຫຸ້ມ ຂອງຊັ້ນ

ເຮືອນຍອດຕົ້ນໄມ້ ຊາວ ສ່ວນຮ້ອຍ (20%) ຂຶ້ນໄປ ໃສ່ທີ່ດິນຕອນນີ້, ຍົກເວັ້ນປະເພດທີ່ດິນປຸກສ້າງ ແລະ ທີ່ດິນກະສິກໍາ (ທີ່ດິນນາ) ທີ່ບໍ່ສາມາດໃຫ້ຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ໄດ້ເຖິງ ຊາວ ສ່ວນຮ້ອຍ (20%);

4) ປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ ໃນສັນຍາການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້;

5) ເສຍອາກອນທີ່ດິນປະຈໍາປີ, ເສຍຄ່າທໍານຽມ ແລະ ຄ່າບໍລິການກ່ຽວກັບທີ່ດິນຕາມລະບຽບການ;

6) ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;

7) ປະຕິບັດຕາມກົດໝາຍອື່ນທີ່ກ່ຽວຂ້ອງ.

**3. ຂໍ້ຫ້າມ ສໍາລັບການໄດ້ຮັບສິດນໍາໃຊ້ທີ່ດິນປ່າໄມ້:**

1) ຫ້າມ ເອົາສິດນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຜູ້ອື່ນ ດ້ວຍການຂາຍ, ມອບ, ຍົກໃຫ້ຜູ້ອື່ນທີ່ບໍ່ແມ່ນສາຍຍາດ ຫຼື ແລກປ່ຽນ ສິດນໍາໃຊ້ທີ່ດິນ, ການເອົາເຂົ້າເປັນຮຸ້ນ;

2) ຫ້າມ ເອົາສິດນໍາໃຊ້ທີ່ດິນປ່າໄມ້ ຈາກສິດໄດ້ຮັບໝາກຜົນຈາກທີ່ດິນ ໄປໃຫ້ບຸກຄົນອື່ນ ເຊົ່າ ແລະ ຄໍ້າປະກັນ;

3) ຫ້າມ ນໍາໃຊ້ສິດນໍາໃຊ້ທີ່ດິນປ່າໄມ້ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງທີ່ມີສິດຕາມລິງຕາມກົດໝາຍ;

4) ຫ້າມລະເມີດເງື່ອນໄຂຂອງການອອກໃບຢັ້ງຢືນການນໍາໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້.

**4. ການເສຍສິດການນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້:**

1) ນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ລັດມອບໃຫ້ນັ້ນບໍ່ຖືກຕາມເປົ້າໝາຍ;

2) ບໍ່ນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ທີ່ລັດມອບໃຫ້ພາຍໃນກໍານົດເວລາ ສາມ ປີ. ໃນກໍລະນີ ບໍ່ນໍາໃຊ້ທີ່ດິນປ່າໄມ້ ທີ່ເຮັດກະສິກໍາ ແບບໝູນວຽນ ຕາມເວລາ ທີ່ໄດ້ກໍານົດໄວ້ໃນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

3) ບໍ່ເສຍອາກອນທີ່ດິນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

4) ຖືກສານຕັດສິນໃຫ້ເສຍສິດນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້;

5) ລະເມີດຂໍ້ຫ້າມທີ່ໄດ້ລະບຸໄວ້ຂໍ້ 3 ຂ້າງເທິງ.

## ໝວດທີ 4
## ການໃສ່ບາໂຄດ ແລະ ປະທັບຕາໃສ່ ໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້

### ມາດຕາ 12 ການໃສ່ບາໂຄດ

ໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຕ້ອງໃສ່ບາໂຄດ ໂດຍໃຫ້ໃສ່ເບື້ອງເທິງຂໍ້ມູນຕົວເລກກ່ຽວກັບທີ່ຕັ້ງຕອນດິນ ຂອງໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້.

### ມາດຕາ 13 ການປະທັບຕາ

ການປະທັບຕາ ໃສ່ໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຕ້ອງປະທັບຕາເຕັງໃສ່ລາຍເຊັນ ຂອງຫົວໜ້າຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຂັ້ນເມືອງ ກວມເອົາໜຶ່ງສ່ວນສາມ ຂອງລາຍເຊັນມາທາງເບື້ອງຊ້າຍ ໂດຍບໍ່ໃຫ້ທັບ ຫຼື ກວມເອົາຕໍາແໜ່ງ ຂອງຜູ້ລົງລາຍເຊັນ, ບໍ່ໃຫ້ປະທັບຕາກ່ອນລົງລາຍເຊັນ ແລະ ບໍ່ໃຫ້ປະທັບຕາໃສ່ໃນໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ທີ່ບໍ່ມີລາຍເຊັນ. ຊື່ ແລະ ນາມສະກຸນ ຂອງຜູ້ເຊັນໃບທະບຽນຢັ້ງຢືນການນໍາໃຊ້ທີ່ດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ໃຫ້ຈໍ້າຂະໜານ ແລະ ຕັ້ງສາກັບຕໍາແໜ່ງຜູ້ເຊັນ ຢ່າງຊັດເຈນ ແລະ ສື່ຕົງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 14 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ເປັນເຈົ້າການປະສານສົມທົບກັບ ກົມປ່າໄມ້, ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 27 ມີນາ 2026 ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການກຳນົດເນື້ອໃນແບບພິມ ແລະ ການພິມຕາມແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ສະບັບເລກທີ 4186/ກຊສ, ລົງວັນທີ 14 ພະຈິກ 2024 .

ລັດຖະມົນຕີ

ປອ. ລິນຄຳ ດວງສະຫວັນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກກະສິກຳ ແລະ ສິ່ງແວດລ້ອມ ..................
ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ..................
ເລກທີ:.......................
ອອກຄັ້ງທີ..................

ທີ່ຕັ້ງຕອນດິນ:.........................
ແຂວງ:.................................
ເມືອງ:.................................
ຕາແສງ:...............................
ບ້ານ:.................................
ໜ່ວຍ:...............................

## ໃບຢັ້ງຢືນ
## ການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຂອງບຸກຄົນ

ອອກໃຫ້ແກ່:.......................................................................................................................

ວັນ, ເດືອນ, ປີເກີດ:.......................................... ສັນຊາດ:.............................. ອາຊີບ:.......................................

ທີ່ຢູ່ປັດຈຸບັນ ບ້ານ:................................ ໜ່ວຍ:....... ຕາແສງ:.................... ເມືອງ:..................... ແຂວງ:....................

ຊື່ ແລະ ນາມສະກຸນ ຜົວ ຫຼື ເມຍ:..............................................................................................

ສັນຊາດ:............................................................. ອາຊີບ:.........................................................

ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້:.................................................................................... ຖານະ

ຄວາມເປັນເຈົ້າຂອງສິດນຳໃຊ້ທີ່ດິນປ່າໄມ້:............................................................................

ປະເພດທີ່ດິນປ່າໄມ້:.......................................................................... ເຂດ:..................................

ເປົ້າໝາຍການນຳໃຊ້ທີ່ດິນປ່າໄມ້:....................................................... ກຳນົດເວລາ:........... ປີ (ບໍ່ເກີນ ຫ້າສິບປີ)

ປຶ້ມທະບຽນໃບຢັ້ງຢືນການນຳໃຊ້ທີ່ດິນເຫຼັ້ມທີ:............................................ ໃບທີ:.........................................

ແຜນທີ່ຕາດິນເລກທີ:...................... ຕອນດິນເລກທີ:............ ເນື້ອທີ່ດິນ:.................. ຕາແມັດ, ມາດຕາສ່ວນ:....................

**<u>ແຜນທີ່ຕອນດິນ</u>**




ອອກໃຫ້ທີ່:........................ ວັນທີ, ເດືອນ, ປີ:......................

**ຫົວໜ້າຫ້ອງການ**

## <u>ສິດ, ພັນທະ, ຂໍ້ຫ້າມ ແລະ ການເສຍສິດ ຂອງຜູ້ໄດ້ຮັບໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້:</u>

**1. ສິດ ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ**

1) ຊົມໃຊ້ທີ່ດິນ ບໍ່ເກີນ ຫ້າສິບ ປີ, ມີເນື້ອທີ່ ບໍ່ເກີນ ຊາວເຮັກຕາ ຕໍ່ຄອບຄົວ;
2) ປົກປັກຮັກສາທີ່ດິນ;
3) ໄດ້ຮັບໝາກຜົນຈາກທີ່ດິນ ໃນບາງກໍລະນີ ເຊັ່ນ ຜົນຜະລິດ (ເກັບກູ້ ໝາກຜົນ ຫຼື ລາຍໄດ້ຈາກການນຳໃຊ້ທີ່ດິນ), ສິນເຊື່ອກາກບອນປ່າໄມ້;
4) ສືບທອດສິດນຳໃຊ້ທີ່ດິນ.

**2. ພັນທະ ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້:**

1) ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຖືກຕ້ອງຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
2) ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ເຊາະເຈື່ອນ, ຍຸບລົງ, ເຊື່ອມໂຊມ, ຮັກສາຄຸນນະພາບໃຫ້ເໝາະສົມ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;
3) ການນຳໃຊ້ທີ່ດິນປ່າໄມ້ຕ້ອງໄດ້ປູກໄມ້ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ຊາວສ່ວນຮ້ອຍ (20%) ຂຶ້ນໄປ ໃສ່ທີ່ດິນຕອນນີ້, ຍົກເວັ້ນປະເພດທີ່ດິນປຸກສ້າງ ແລະ ທີ່ດິນກະສິກຳ (ທີ່ດິນນາ) ທີ່ບໍ່ສາມາດໃຫ້ຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ໄດ້ເຖິງ ຊາວ ສ່ວນຮ້ອຍ (20%);
4) ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ໃນສັນຍາການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້;
5) ເສຍອາກອນທີ່ດິນປະຈຳປີ, ເສຍຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບທີ່ດິນຕາມລະບຽບການ;
6) ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
7) ປະຕິບັດຕາມກົດໝາຍອື່ນທີ່ກ່ຽວຂ້ອງ.

**3. ຂໍ້ຫ້າມ ສຳລັບການໄດ້ຮັບສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້:**

1) ຫ້າມ ເອົາສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຜູ້ອື່ນ ດ້ວຍການຂາຍ, ມອບ, ຍົກໃຫ້ຜູ້ອື່ນທີ່ບໍ່ແມ່ນສາຍຍາດ ຫຼື ແລກ ປ່ຽນ ສິດນຳໃຊ້ທີ່ດິນ, ການເອົາເຂົ້າເປັນຮຸ້ນ;
2) ຫ້າມ ເອົາສິດນຳໃຊ້ທີ່ດິນປ່າໄມ້ ຈາກສິດໄດ້ຮັບໝາກຜົນຈາກທີ່ດິນ ໄປໃຫ້ບຸກຄົນອື່ນ ເຊົ່າ ແລະ ຄ້ຳປະກັນ;
3) ຫ້າມ ນຳໃຊ້ສິດນຳໃຊ້ທີ່ດິນປ່າໄມ້ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງທີ່ມີສິດຕົກລົງຕາມກົດໝາຍ;
4) ຫ້າມລະເມີດເງື່ອນໄຂຂອງການອອກໃບຢັ້ງຢືນການນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້.

**4. ການເສຍສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້:**

1) ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ລັດມອບໃຫ້ນັ້ນບໍ່ຖືກຕາມເປົ້າໝາຍ;
2) ບໍ່ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ທີ່ລັດມອບໃຫ້ພາຍໃນກຳນົດເວລາ ສາມ ປີ. ໃນກໍລະນີ ບໍ່ນຳໃຊ້ທີ່ດິນປ່າໄມ້ ທີ່ເຮັດກະສິກຳ ແບບໝູນວຽນ ຕາມເວລາ ທີ່ໄດ້ກຳນົດໄວ້ໃນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
3) ບໍ່ເສຍອາກອນທີ່ດິນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
4) ຖືກສານຕັດສິນໃຫ້ເສຍສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້;
5) ລະເມີດຂໍ້ຫ້າມທີ່ໄດ້ລະບຸໄວ້ຂໍ້ 3 ຂ້າງເທິງ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກກະສິກຳ ແລະ ສິ່ງແວດລ້ອມ..................

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ...................

ເລກທີ:......................

ອອກຄັ້ງທີ:...................

ທີ່ຕັ້ງຕອນດິນ:.......................

ແຂວງ:...............................

ເມືອງ:...............................

ຕາແສງ:.............................

ບ້ານ:.................................

ໜ່ວຍ:...............................

# ໃບຢັ້ງຢືນ

## ການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ຂອງລັດ

ອອກໃຫ້ແກ່:........................................................................................................

ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້:..............................................................................

ປະເພດທີ່ດິນປ່າໄມ້:.......................................................... ເຂດ:..........................................

ເປົ້າໝາຍການນຳໃຊ້ທີ່ດິນປ່າໄມ້:............................................ ກຳນົດເວລາ:.............ປີ (ບໍ່ເກີນຫ້າສິບປີ)

ປຶ້ມທະບຽນໃບຢັ້ງຢືນການນຳໃຊ້ທີ່ດິນເຫຼັ້ມທີ:.............................. ໃບທີ:..............................................

ແຜນທີ່ຕາດິນເລກທີ:...................ຕອນດິນເລກທີ:...........ເນື້ອທີ່ດິນ:...................ຕາແມັດ, ມາດຕາສ່ວນ:........................

**ແຜນທີ່ຕອນດິນ**

ໜ

ອອກໃຫ້ທີ່:........................ ວັນທີ, ເດືອນ, ປີ:.......................

**ຫົວໜ້າຫ້ອງການ**

## ສິດ, ພັນທະ, ຂໍ້ຫ້າມ ແລະ ການເສຍສິດ ຂອງຜູ້ໄດ້ຮັບໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້:

1. **ສິດ ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ:**
   1) ຊົມໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ບໍ່ເກີນ ຫ້າສິບ ປີ;
   2) ປົກປັກຮັກສາປ່າໄມ້ ແລະ ທີ່ດິນ;
   3) ໄດ້ຮັບໝາກຜົນຈາກປ່າໄມ້ ແລະ ທີ່ດິນປ່າໄມ້ ໃນບາງກໍລະນີ ເຊັ່ນ ຜົນຜະລິດ (ເກັບກູ້ ໝາກຜົນ ຫຼື ລາຍໄດ້ຈາກການນຳໃຊ້ທີ່ດິນ), ສິນເຊື່ອກາກບອນປ່າໄມ້;
   4) ສືບທອດສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້.

2. **ພັນທະ ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້:**
   1) ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຖືກຕ້ອງຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
   2) ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຢູ່ໃນສະພາບດີບໍ່ໃຫ້ເຊາະເຈື່ອນຍຸບລົງ, ເສື່ອມໂຊມ ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;
   3) ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຕ້ອງໄດ້ປູກໄມ້ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ຊາວສ່ວນຮ້ອຍ (20%) ຂຶ້ນໄປ ໃສ່ທີ່ດິນຕອນນີ້, ຍົກເວັ້ນປະເພດທີ່ດິນປຸກສ້າງ ແລະ ທີ່ດິນກະສິກຳ (ທີ່ດິນນາ) ທີ່ບໍ່ສາມາດໃຫ້ຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ໄດ້ເຖິງ ຊາວ ສ່ວນຮ້ອຍ (20%);
   4) ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ໃນສັນຍາການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້;
   5) ເສຍອາກອນທີ່ດິນປະຈຳປີ, ເສຍຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບທີ່ດິນຕາມລະບຽບການ;
   6) ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
   7) ປະຕິບັດຕາມກົດໝາຍອື່ນທີ່ກ່ຽວຂ້ອງ.

3. **ຂໍ້ຫ້າມ ສຳລັບການໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້:**
   1) ຫ້າມ ເອົາສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຜູ້ອື່ນ ດ້ວຍການຂາຍ, ມອບ, ຍົກໃຫ້ຜູ້ອື່ນ ຫຼື ແລກປ່ຽນ ສິດນຳໃຊ້ທີ່ດິນ, ການເອົາເຂົ້າເປັນຮຸ້ນ;
   2) ຫ້າມ ເອົາສິດນຳໃຊ້ທີ່ດິນປ່າໄມ້ ຈາກສິດໄດ້ຮັບໝາກຜົນຈາກທີ່ດິນ ໄປໃຫ້ບຸກຄົນອື່ນ ເຊົ່າ ແລະ ຄ້ຳປະກັນ;
   3) ຫ້າມ ນຳໃຊ້ສິດນຳໃຊ້ທີ່ດິນປ່າໄມ້ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງທີ່ມີສິດຕົກລົງຕາມກົດໝາຍ;
   4) ຫ້າມລະເມີດເງື່ອນໄຂຂອງການອອກໃບຢັ້ງຢືນການນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້.

4. **ການເສຍສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**
   1) ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ລັດມອບໃຫ້ນັ້ນບໍ່ຖືກຕາມເປົ້າໝາຍ;
   2) ບໍ່ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ທີ່ລັດມອບໃຫ້ພາຍໃນກຳນົດເວລາ ສາມ ປີ;
   3) ບໍ່ເສຍອາກອນທີ່ດິນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
   4) ຖືກສານຕັດສິນໃຫ້ເສຍສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້;
   5) ລະເມີດຂໍ້ຫ້າມທີ່ໄດ້ລະບຸໄວ້ຂໍ້ 3 ຂ້າງເທິງ.